ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ.ແລະ ການຄ້າ ເລກທີ 0014---- /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 07 JAN 2016

## ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ.

ເລື່ອງ: ປັບລົງລາຄາຂາຍຍ່ອຍ ນ້ຳມັນແອັດຊັງ ແລະ ນ້ຳມັນກາຊວນໃນຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 109/ຫລບ.ກລຂ, ລົງວັນທີ 19/01/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 1519/ຫລບ.ກລສ, ລົງວັນທີ 29/10/2014.
- ອີງຕາມ ມາດຕາ 20 ຂອງກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່, ເລກທີ 05/ສພຊ, ລົງວັນທີ 20/12/2011.
- ອີງຕາມ ສະພາບລາຄາຊື້-ຂາຍນ້ຳມັນເຊື້ອໄຟຢູ່ຕະຫຼາດໂລກໃນປະຈຸບັນໄດ້ມີການປ່ຽນແປງ ແລະ ເພື່ອໃຫ້ສອດຄ່ອງກັບກົນໄກຕະຫຼາດ.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງບັນດາບໍລິສັດນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟໜ້າປ້ຳ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ລາຍການ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 8,160 | 7,130 | 5,750 |
| 2 | ແຂວງຄຳມ່ວນ | 8,190 | 7,160 | 5,780 |
| 3 | ແຂວງສະຫວັນນະເຂດ | 8,190 | 7,160 | 5,780 |
| 4 | ແຂວງຈຳປາສັກ | 8,220 | 7,190 | 5,810 |
| 5 | ແຂວງບໍ່ແກ້ວ | 8,260 | 7,230 | 5,850 |
| 6 | ແຂວງຊຽງຂວາງ | | 7,330 | 5,950 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 08/01/2016 , ເວລ 06 : 00 ໂມງ ໃນຂອບເຂດທົ່ວປະເທດ; .
- ໃຫ້ບັນດາບໍລິສັດປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ;

- ສ່ວນການຄິດໄລ່ເສັ້ງພາສີ, ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ(ອມພ), ກອງທຶນທາງ, ຄັງແຮ ແລະ ກໍາໄລຈາກຄ່າບໍລິການປໍ້າຂາຍຍ່ອຍ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມໂຄງສ້າງທີ່ໄດ້ກໍານົດໄວ້ໃນໂຄງສ້າງລາຄານໍ້າມັນເຊື້ອໄຟຂອງຈຸດຕ່າງໆ ຕາມແຈ້ງການສະບັບນີ້ ຈົນກວ່າຈະມີການປ່ຽນແປງ;
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 2512/ອຄ.ຄພນ, ລົງວັນທີ 18/12/2015.

* ໝາຍເຫດ:

ສ່ວນຈຸດອື່ນໆ ແມ່ນໃຫ້ຄິດໄລ່ຄ່າຂົນສົ່ງ ແລ້ວບວກເຂົ້າຄືປະຕິບັດຜ່ານມາຢ່າງເໝາະສົມແລ້ວໃຫ້ບໍລິສັດລາຍງານໃຫ້ກົມການຄ້າພາຍໃນຊາບດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າ

ນ ເຂັມມະນີ ພົນເສນາ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ)
- ຫ້ອງວ່າການສັດຖະບານ (ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງການເງິນ (ເພື່ອຊາບ)
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ)
- ກົມພາສີ, ກົມສ່ວຍສາອາກອນ, ກົມນະໂຍບາຍການເງິນແລະ ກົມງົບປະມານ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື)
- ກອງທຶນບູລະນະທາງຫຼວງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງກະຊວງ ອຄ (ເພື່ອຊາບ ແລະຕິດຕາມ)
- ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ)